vhs
DVV International

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Education for Everyone. Worldwide.
Lifelong.

# ຈົດໝາຍຂ່າວ

## ການຮຽນຮູ້ຕະຫຼອດຊີວິດ ແລະ ການສຶກສານອກໂຮງຮຽນ ໃນ ສປປ ລາວ ແລະ ອາຊີຕາເວັນອອກສ່ຽງໃຕ້




№ 4.2016

ສະບັບພິເສດ:
ບົດບາດຍິງ-ຊາຍ

ສະໜັບສະໜູນ ໂດຍ
Federal Ministry
for Economic Cooperation
and Development

DVV International

Education for Everyone. Worldwide. Lifelong.

ຈົດໝາຍຂ່າວ № 4/2016



# ບົດບັນນາທິການ

ສະບາຍດີ ທ່ານຜູ້ອ່ານ

ປີ 2016 ເປັນປີ ທີ່ພາກສ່ວນກ່ຽວຂ້ອງມີຄວາມເຂົ້າໃຈຂື້ນຕື່ມກ່ຽວກັບແນວຄວາມຄິດການຮຽນຮູ້ຕະຫຼອດຊີວິດ: ນຳມາໃຊ້ເປັນໂຄງຮ່າງຫຼັກສຳລັບການສ້າງຂະແໜງການສຶກສາໃນວຽກງານເປົ້າໝາຍການພັດທະນາແບບຍືນຍົງ(SDGs), ການຮຽນຮູ້ຕະຫຼອດຊີວິດ ແມ່ນໄດ້ຮັບການຍອມຮັບຢ່າງກວ້າງຂວາງ ວ່າເປັນກຸນແຈສຳຄັນນຳໄປສູ່ຄວາມສຳເລັດໃນບໍລິບົດ ຂອງການລວມກຸ່ມປະເທດອາຊຽນ. ເພື່ອໃຫ້ແນ່ໃຈ, ນີ້ຈະສ້າງໂອກາດສຳຄັນ ສຳລັບຂະແໜງການສຶກສານອກໂຮງຮຽນ (ກສນ) ໃຫ້ເປັນທີ່ຍອມຮັບຍິ່ງຂຶ້ນ. ແຕ່ໜ້າເສຍດາຍ, ຈົນເຖິງປະຈຸບັນນີ້ ຫຼາຍປະເທດ ລວມທັງ ສປປ ລາວ ໃຊ້ງົບປະມານພຽງແຕ່ 1% ຂອງງົບປະມານການສຶກສາສຳລັບວຽກງານ ກສນ. ຜູ້ໃຫ້ທຶນຈຳນວນຫຼາຍ ບໍ່ເຫັນທ່າແຮງຂອງ ກສນ ແລະ ສຸມໃສ່ແຕ່ວຽກງານ ການສຶກສາຂັ້ນພື້ນຖານ, ວິຊາຊີບ ຫຼື ການສຶກສາຊັ້ນສູງ. ມັນຈະເປັນວຽກຂອງພວກເຮົາໃນການສ້າງກະທູ້ຕໍ່ກັບ ກສນ ໃນການແກ້ປັນຫາຜົນກະທົບຂອງການປ່ຽນແປງດິນຟ້າອາກາດ, ເພື່ອໃຫ້ມີການປ່ຽນແປງ ຄັ້ງທີສອງ ແລະ ການຮູ້ໜັງສືສຳລັບກຸ່ມຄົນທີ່ອອກໂຮງຮຽນ ແລະ ດ້ອຍໂອກາດ ແລະ ສະໜອງໃຫ້ມີການຝຶກອົບຮົມທັກສະຊີວິດ ເພື່ອຊ່ວຍໃຫ້ທຸກຄົນເປັນພົນລະເມືອງທີ່ຫ້າວຫັນ.

ຂ້າພະເຈົ້າຕ້ອງການຈະດຶງດູດຄວາມສົນໃຈດ້ານໃດໜຶ່ງທີ່ສະເພາະເຈາະຈົງ: ບົດບາດຂອງ ກສນ ໃນການຮັບມືກັບການປິດຊ່ອງຫວ່າງ ລະຫວ່າງຄວາມຮັ່ງມີ ແລະ ທຸກຈົນ. ການຂັບເຄື່ອນນີ້ຈະເຕີບໃຫຍ່ ແລະ ຂະຫຍາຍໂຕໃນພາກພື້ນຂອງເຮົາ ຖ້າບໍ່ສາມາດ ແກ້ປັນຫານີ້ໄດ້ ກໍຈະກໍ່ໃຫ້ເກີດປັນຫາຄວາມຕຶງຄຽດ ແລະ ຄວາມຮຸນແຮງ. ກສນ ມີບົດບາດຕ່າງໆ ໃນບໍລິບົດຕໍ່ໄປນີ້:

- ການຊົດເຊີຍ: ໂອກາດທີສອງສຳລັບການສຶກສາ ແລະ ການຝຶກອົບຮົມທັກສະ ເພື່ອເພີ່ມລາຍໄດ້ ແລະ ການຈ້າງງານຂອງກຸ່ມດ້ອຍໂອກາດ ແມ່ນວຽກງານຂອງ ກສນ. ສະໜັບສະໜູນຄົນໃນການປັບປຸງຊີວິດການເປັນຢູ່ແມ່ນວຽກຫຼັກ.
- ການເຊື່ອມໂຍງ: ສັງຄົມທີ່ສະຫງົບສຸກ ຈະສ້າງຂຶ້ນບົນພື້ນຖານຄວາມສາມາດຂອງທຸກພາກສ່ວນ ເພື່ອການພົວພັນ ແລະ ເຮັດວຽກຮ່ວມກັນ. ກສນ ມີບົດບາດສຳຄັນໃນການສະໜັບສະໜູນໃຫ້ເກີດການຫາລື ແລະ ການໃຫ້ຂໍ້ມູນກ່ຽວກັບຫົວຂໍ້ທີ່ສຳຄັນໃນສັງຄົມ.
- ການປັບໂຕ: ກສນ ມີຄວາມສຳຄັນຕະຫຼອດມາແມ່ນການສະໜັບສະໜູນປະຊາຊົນ ເພື່ອໃຫ້ມີການປ່ຽນແປງ, ບໍ່ວ່າຈະເປັນໃນຕະຫຼາດແຮງງານ, ສະພາບອາກາດ ຫຼື ເຕັກໂນໂລຊີ ແລະ ການເຮັດວຽກຮ່ວມກັນ.

ສະບັບສຸດທ້າຍຂອງປີ 2016 ຈະໃຫ້ຂໍ້ມູນທີ່ໜ້າສົນໃຈກ່ຽວກັບບົດຮຽນທີ່ພົ້ນເດັ່ນ. ການສຶກສາຜູ້ໃຫຍ່ ແລະ ກສນ ສາມາດນຳສະເໜີ ໂດຍສະເພາະໃນຂົງເຂດບົດບາດຍິງ-ຊາຍ ເພື່ອໃຫ້ເຫັນພາບທີ່ສະເພາະເຈາະຈົງ.

ຂໍໃຫ້ທ່ານມີຄວາມສຸກກັບການອ່ານ

*ອູເວີ ກາກເຕີນສະແລເກີ*
ຜູ້ອຳນວຍການປະຈຳພາກພື້ນ
ດີວີວີ ອິນເຕີເນເຊິນແນວ ປະຈຳພາກພື້ນອາຊີໃຕ້

DVV International

Education for Everyone. Worldwide.
Lifelong.

# ການຝຶກອົບຮົມຫົວຂໍ້ການເຊື່ອມສານບົດບາດຍິງ-ຊາຍເຂົ້າໃນວຽກງານການສຶກສານອກໂຮງຮຽນ ຂອງໂຄງການຝຶກອົບຮົມເພື່ອເປັນຄູຝຶກໃນການສອນຜູ້ໃຫຍ່ ທີ່ ແຂວງຄໍາມ່ວນ

*ດີວີວີ ອິນເຕີເນເຊິນແນວ ໃນປະຈຸບັນນີ້ກໍາລັງດໍາເນີນໂຄງການທີ່ມີຊື່ວ່າ ທີໂອທີ ມາສເຕີ ເທຣນເນີ ຫຼື ໂຄງການຝຶກອົບຮົມເພື່ອເປັນຄູຝຶກໃນການສອນຜູ້ໃຫຍ່ ແລະ ເປົ້າໝາຍຫຼັກຂອງໂຄງການແມ່ນການສ້າງຄວາມອາດສາມາດຂອງຄູຝຶກໃນຂະແໜງການສຶກສານອກໂຮງຮຽນ. ໃນໂຄງການນີ້ມີທັງໝົດ 5 ພາກ ຂອງການຝຶກອົບຮົມ ເຊິ່ງດໍາເນີນການໃນລະຫວ່າງປີ 2015-2017 ບວກກັບອີກສອງວິຊາເລືອກ. ການເຊື່ອມສານບົດບາດຍິງຊາຍແມ່ນໜຶ່ງວິຊາເລືອກ ແລະ ການຝຶກອົບຮົມຄັ້ງນີ້ໄດ້ຈັດຂຶ້ນໃນວັນທີ 20-22 ກັນຍາ ທີ່ເມືອງທ່າແຂກ ແຂວງຄໍາມ່ວນ.*

ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແມ່ນໜຶ່ງໃນເປົ້າໝາຍຂອງການພັດທະນາແບບຍືນຍົງ. ຕາມສະພາບຄວາມເປັນຈິງໃນຫຼາຍໆ ໂຄງການພັດທະນາ ການສຶກສາໃນລະດັບຊາດ, ລະດັບແຂວງ, ລະດັບເມືອງ ແລະ ລະດັບທ້ອງຖິ່ນ ຍັງມີຂໍ້ຄົງຄ້າງກ່ຽວກັບບົດບາດຍິງຊາຍ ເຊິ່ງແມ່ນ ການທີ່ແມ່ຍິງບໍ່ໄດ້ເຂົ້າມາມີສ່ວນຮ່ວມຢ່າງ ເຕັມທີ່ ຫຼື ບໍ່ໄດ້ຖືກກ່າວເຖິງ. ເພື່ອສືບຕໍ່ໂຄງການການເປັນຄູຝຶກການສອນຜູ້ໃຫຍ່ ຄັ້ງນີ້ ດີວີວີ ອິນເຕີເນເຊິນແນວ ໄດ້ຈັດຝຶກອົບຮົມຫົວຂໍ້ການ ເຊື່ອມສານບົດບາດຍິງ-ຊາຍ ໃນວຽກງານການສຶກສານອກໂຮງຮຽນ ສໍາລັບໂຄງການການເປັນຄູຝຶກການສອນຜູ້ໃຫຍ່ຂອງພວກເຮົາ. ໃນການຝຶກອົບຮົມໄດ້ສະໜອງ ໂອກາດໃນການແລກປ່ຽນຂໍ້ມູນ ແລະປະສົບການເພື່ອສ້າງຄວາມອາດສາມາດສໍາລັບການດໍາເນີນງານ. ທ່ານ ນາງ ບຸດສະດີ ກຸນນະວົງ ຜູ້ຊ່ຽວຊານດ້ານບົດບາດ ຍິງ-ຊາຍ ເປັນຜູ້ກະກຽມເນື້ອໃນ ແລະ ດໍາເນີນການຝຶກອົບຮົມ ຕົ້ນຕໍແມ່ນອີງຕາມ ຄວາມຊ່ຽວຊານດ້ານບົດບາດຍິງ-ຊາຍ ກັບຄູ່ຮ່ວມພັດທະນາໃນ ສປປ ລາວ ແລະ ພາກພື້ນ. ທ່ານ ນາງ ອານິຕາ ບໍກາ ຜູ້ຊ່ຽວຊານດ້ານບົດບາດ ຍິງ-ຊາຍ ຈາກສະມາຄົມ ອາສເບ (ສະມາຄົມເອຊີບປາຊີຟິກໃຕ້ເພື່ອການສຶກສາຂັ້ນພື້ນຖານ ແລະ ການສຶກສາຜູ້ໃຫຍ່) ຈາກອິນເດຍເປັນຄູຝຶກຮ່ວມ.



ໃນການຝຶກອົບຮົມຄັ້ງນີ້ ຜູ້ເຂົ້າຮ່ວມແຕ່ລະທ່ານ ແມ່ນມີໂອກາດໄດ້ແບ່ງປັນ ແລະ ແລກປ່ຽນ ປະສົບການຂອງເຂົາເຈົ້າ ໃນວຽກງານບົດບາດຍິງ-ຊາຍທີ່ກ່ຽວຂ້ອງກັບສະຖານທີ່ເຮັດວຽກຂອງເຂົາເຈົ້າ. ໃນອະນາຄົດ ເມື່ອພວກເຂົາເຈົ້າຈັດການຝຶກອົບຮົມ ຫວັງຢ່າງຍິ່ງວ່າພວກເຂົາເຈົ້າຈະສາມາດນໍາໃຊ້ທັດສະນະດ້ານບົດບາດຍິງ-ຊາຍ ແລະ ນໍາສະເໜີຂໍ້ມູນດ້ານບົດບາດຍິງ-ຊາຍ ໃຫ້ແກ່ກຸ່ມເປົ້າໝາຍ ແລະ ເພື່ອນຮ່ວມງານຂອງເຂົາເຈົ້າ. ຜູ້ເຂົ້າຮ່ວມຍັງໄດ້ມີໂອກາດໃນການນໍາໃຊ້ ແລະ ທົບທວນຄືນບົດຮຽນທີ່ໄດ້ຮຽນມາແລ້ວໃນການຝຶກອົບຮົມກ່ອນໜ້ານີ້ ເຊັ່ນ ວິທີການສອນຜູ້ໃຫຍ່, ເຕັກນິກການສອນ ໂດຍສະເພາະແມ່ນຄວາມຄິດເຫັນ ແລະ ຄໍາຖາມ ພາຍຫຼັງການຈັດຝຶກອົບຮົມຕົວຈິງ.

# ບົດບາດຍິງ-ຊາຍ ໃນລາວ

*ບຸດສະດີ ກຸນນະວົງ*
ຊ່ຽວຊານດ້ານບົດບາດຍິງ-ຊາຍ

ໃນປີ 2014 ພົນລະເມືອງ ໂດຍລວມຂອງ ສປປ ລາວ ມີປະມານ 6.8 ລ້ານຄົນ ແລະ ມີອັດຕາການຂະຫຍາຍຕົວ 2% ຕໍ່ປີ. ເຊິ່ງໄດ້ຖືກຄາດການວ່າຈະເພີ່ມຂຶ້ນເຖິງ 8 ລ້ານຄົນ ໃນປີ 2020. ອາຍຸຍືນໂດຍສະເລ່ຍໄດ້ເພີ່ມຂຶ້ນເຖິງ 60 ປີ ສໍາລັບເພດຊາຍ ແລະ 65 ປີ ສໍາລັບເພດຍິງ ໃນປີ 2012 ນັບຕັ້ງແຕ່ ລະບົບນໍ້າ ແລະ ສາທາລະນະສຸກ ໄດ້ຮັບການປັບປຸງ. ຍິ່ງໄປກວ່ານັ້ນ, ພົນລະເມືອງທີ່ຢູ່ໃນຊ່ວງອາຍຸໜຸ່ມຫຼາຍສະເລ່ຍປະມານ 21,6 ປີ. (http://worldpopulationreview.com/countries/laos-population/)

ໃນ ສປປ ລາວ ເພດຍິງແຕ່ງງານແຕ່ຍັງໜຸ່ມກວ່າເພດຊາຍ. 1 ໃນ 4 ຂອງເພດຍິງໜຸ່ມ ແລະ ປະມານ 1 ໃນ 10 ຂອງ ເພດຊາຍ ມີອາຍຸລະຫວ່າງ 15-19 ປີ ແຕ່ງງານ. ອາຍຸສະເລ່ຍສໍາລັບການແຕ່ງງານຄັ້ງທໍາອິດໃນກຸ່ມເພດຍິງ ຢູ່ລະຫວ່າງ 25-49 ປີ ແລະ ໄດ້ມີການປ່ຽນແປງເລັກນ້ອຍໃນໄລຍະ 20 ປີຜ່ານມາ. 37% ຂອງເພດຍິງ ແຕ່ງງານຕອນອາຍຸ 18 ປີ, 58% ແຕ່ງງານຕອນອາຍຸ 20 ປີ, ແລະ 22% ແມ່ນບໍ່ໄດ້ແຕ່ງງານ. ມີເພດຍິງປະມານ 10% ທີ່ເປັນຫົວໜ້າຄອບຄົວໃນຈໍານວນຄົວເຮືອນທັງໝົດ ສ່ວນຫຼາຍແມ່ນ ເນື່ອງຈາກວ່າຜົວຂອງພວກເຂົາໄດ້ເສຍຊີວິດ ແລະ ໃນນັ້ນ 20% ແມ່ນຍ້ອນຜົວໄດ້ຍົກຍ້າຍຖິ່ນຖານ (ADB, World Bank 2012: 34).

ສະພາບການສຶກສາ ແລະ ຄວາມອຸດົມສົມບູນ ລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ ແມ່ນມີຄວາມແຕກຕ່າງກັນຢ່າງໃຫຍ່ຫຼວງ. ເດັກຍິງອາຍຸລະຫວ່າງ 15-19 ປີ 94 ຄົນ ຕໍ່ 1,000 ຄົນ ແມ່ນມີຄວາມອຸດົມສົມບູນ. ໃນເຂດຊົນນະບົດມີ ເດັກຍິງເກີດ 114 ຄົນ ຕໍ່ 1,000 ຄົນ, ໃນຂະນະທີ່ຢູ່ໃນເຂດຕົວເມືອງມີພຽງ 44 ຄົນ ຕໍ່ 1,000 ຄົນ. ໄລຍະຫ່າງຂອງການຖືພາທີ່ລູກເກີດມາເປັນແມ່ຍິງ ແຕ່ລະຄັ້ງສະເລ່ຍ ໃນເຂດຕົວເມືອງແມ່ນ 46.3 ເດືອນ ເມື່ອທຽບໃສ່ 32.2 ເດືອນ ສໍາລັບເພດຍິງໃນເຂດຊົນນະບົດ. ນອກຈາກນີ້, ອາຍຸສະເລ່ຍຂອງເພດຍິງໃນການເກີດລູກຄົນທໍາອິດແມ່ນ 21.1 ປີ.

ອັດຕາການຮູ້ໜັງສືແມ່ນສູງຂຶ້ນໃນກຸ່ມພົນລະເມືອງໜຸ່ມ: ອາຍຸລະຫວ່າງ 15-24 ປີ 69% ຂອງເພດຍິງ ແລະ ເພດຊາຍ 77% ແມ່ນ ຮູ້ໜັງສື, ແຕ່ກໍຍັງມີຄວາມແຕກຕ່າງກັນ ອີງຕາມເຂດພູມສັນຖານ. ໃນພາກໃຕ້ ມີພຽງ 55% ຂອງເພດຍິງ ເມື່ອທຽບກັບ 70% ຂອງເພດຊາຍ ແມ່ນຮູ້ໜັງສື. ໃນພາກກາງອັດຕາການຮູ້ໜັງສືຢູ່ທີ່ 76% ໃນເພດຍິງ ແລະ 79% ໃນເພດຊາຍ.

Education for Everyone. Worldwide.
Lifelong.



## ເພດຍິງໃນລະດັບການນຳ

ອັດຕາສ່ວນຂອງເພດຍິງໃນລະດັບການນຳແມ່ນຍັງບໍ່ທັນມີຫຼາຍ (ປະມານ 5-6%), ເຊິ່ງເນື່ອງຈາກວ່າ 'ເພດຍິງຕ້ອງມີຄວາມຮັບຜິດຊອບໃນຄອບຄົວ, ການປູກຝັງຈາກຄອບຄົວ ແລະ ຂໍ້ຈຳກັດອື່ນໆ ໃນການມີສ່ວນຮ່ວມ' (MPI 2013b: 19).

ຜູ້ນຳເພດຍິງແມ່ນມີຄວາມຈຳເປັນໃນທຸກລະດັບ, ແຕ່ມັນອາດເປັນເລື່ອງຍາກ ໂດຍສະເພາະ ໃນລະດັບໝູ່ບ້ານ, ບ່ອນທີ່ປະເພນີ, ວັດທະນະທຳ, ບົດບາດຂອງເພດຍິງໃນຄົວເຮືອນ, ແລະ ຄວາມໝັ້ນໃຈໃນຕົນເອງ ທີ່ສົ່ງຜົນກະທົບຕໍ່ພວກເຂົາໃນການເຂົ້າໄປເປັນສ່ວນໜຶ່ງ ຂອງຄະນະນຳໝູ່ບ້ານ. ໃນວາລະສານສະະພັນແມ່ຍິງ ໄດ້ຕັ້ງຂໍ້ສັງເກດວ່າ ໃນປີ 2010 ໃນລາວມີ 8,608 ໝູ່ບ້ານ, ແຕ່ມີເພດຍິງ ພຽງ 226 ຄົນ ທີ່ໄດ້ເປັນນາຍບ້ານ (2.62%) ແລະ 942 ຄົນ ຫຼື 6.6% ຂອງເພດຍິງ ແມ່ນໄດ້ເປັນຄະນະບ້ານ (Work Live Laos 14.5.12). ໃນຫຼາຍປີຜ່ານມາ ລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ໄດ້ດຳເນີນການເພື່ອສົ່ງເສີມແມ່ຍິງເຂົ້າມາມີສ່ວນຮ່ວມສັງຄົມ.

### ຕາຕະລາງ ເພດຍິງໃນລະດັບການນຳ ໃນ ສປປ ລາວ

| ຕຳແໜ່ງ | ລວມ | ເພດຍິງ | ເພດຍິງ % |
|---|---|---|---|
| ສະມາຊິກສະພາແຫ່ງຊາດ | 132 | 33 | 25 |
| ລັດຖະມົນຕີ ແລະ ທຽບເທົ່າ | 50 | 7 | 14 |
| ຮອງລັດຖະມົນຕີ ແລະ ທຽບເທົ່າ | 126 | 21 | 16.7 |
| ຫົວໜ້າກົມ ແລະ ທຽບເທົ່າ | 437 | 71 | 16.24 |
| ເຈົ້າຄອງແຂວງ ແລະ ເຈົ້າຄອງນະຄອນຫຼວງ | 17 | 0 | 0 |
| ຮອງເຈົ້າຄອງແຂວງ | 50 | 4 | 8 |
| ເຈົ້າເມືອງ | 145 | 12 | 8 |
| ນາຍບ້ານ | 8651 | 145 | 2 |
| ຄະນະບ້ານ | 16,786 | 1200 | 7 |

ຂໍ້ມູນຈາກ% ກະຊວງພາຍໃນ ປີ 2013

ດັ່ງນັ້ນ, ຫ້ອງການ ດີວີວີ ອິນເຕີເນເຊິນແນວ ຈຶ່ງໄດ້ຈັດຝຶກອົບຮົມການເຊື່ອມສານບົດບາດຍິງ-ຊາຍ ສຳລັບ ຄູຝຶກ 30 ທ່ານ ທີ່ເຮັດວຽກໃນຂົງເຂດວຽກງານການສຶກສານອກໂຮງຮຽນ. ຈຸດປະສົງຂອງການຝຶກອົບຮົມໃນຄັ້ງນີ້ເປັນການເສີມສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບບົດບາດຍິງ-ຊາຍ ໃນກຸ່ມຄູຝຶກ. ຫົວຂໍ້ການຝຶກອົບຮົມລວມມີ ຄວາມຕ້ອງການສະເພາະຂອງແມ່ຍິງ ແລະ ເດັກຍິງ, ໂດຍສະເພາະ ແມ່ຍິງ ແລະ ເດັກຍິງທີ່ມີຄວາມບົກພ່ອງ, ວິທີການເຊື່ອມສານບົດບາດຍິງ-ຊາຍໂດຍສະເພາະໃນຂົງເຂດວຽກງານ, ແລະ ລວມທັງການເຊື່ອມສານບົດບາດຍິງ-ຊາຍເຂົ້າໃນວຽກງານການສຶກສານອກໂຮງຮຽນ ແລະ ໃນການເຮັດວຽກປະຈຳວັນ. ນອກຈາກນັ້ນ, ເມື່ອມີການພັດທະນາ ແລະ ຈັດຕັ້ງປະຕິບັດໂຄງການ ຜູ້ເຂົ້າຮ່ວມຈະມີຄວາມສາມາດວິເຄາະບັນຫາ ແລະ ພິວພັນເຖິງການພິຈາລະນາ ເພື່ອຮັບປະກັນໃຫ້ມີການເຊື່ອມສານບົດບາດຍິງ-ຊາຍ. ໂດຍນຳໃຊ້ເຕັກນິກການສອນຜູ້ໃຫຍ່ໃນການຝຶກອົບຮົມ, ຜູ້ເຂົ້າຮ່ວມສາມາດພັດທະນາ ແລະ ຮັບປະກັນການມີສ່ວນຮ່ວມຂອງແມ່ຍິງ ແລະ ເດັກນ້ອຍ ເຊິ່ງເປັນຜົນປະໂຫຍດຂອງໂຄງການ.



Education for Everyone. Worldwide.
Lifelong.

# ການເຊື່ອມສານບົດບາດຍິງຊາຍໃນວຽກງານການສຶກສານອກໂຮງຮຽນ

*ດາລຸນນີ ສີສຸລາດ*, ດີວີວີ ອິນເຕີເນເຊິນແນວ, ສປປ ລາວ

ການຝຶກອົບຮົມການເຊື່ອມສານບົດບາດຍິງຊາຍ ເຂົ້າໃນວຽກງານການສຶກສານອກໂຮງຮຽນ ໄດ້ຈັດຂຶ້ນໃນວັນທີ 20-22 ກັນຍາ ທີ່ຜ່ານມາ ທີ່ເມືອງທ່າແຂກ ແຂວງຄຳມ່ວນ. ນີ້ແມ່ນໜຶ່ງໃນວິຊາເລືອກສຳລັບໂຄງການກະກຽມເພື່ອເປັນຄູຝຶກ ສຳລັບການສຶກສານອກໂຮງຮຽນ ໃນ ສປປ ລາວ. ອີງຕາມຫຼັກສູດໂກລບາລີ(globALE) ເຊິ່ງມີ 5 ພາກຫຼັກ ແລະ ອີກ 2 ວິຊາເສີມ. ຫຼັກສູດ globALE ເປັນຫຼັກສູດພື້ນຖານທີ່ສາມາດນຳໄປໃຊ້ ຝຶກອົບຮົມຂອງນັກການສຶກສາຜູ້ໃຫຍ່ທົ່ວໂລກ.  ມັນໄດ້ຖືກພັດທະນາພາຍໃຕ້ການຮ່ວມມືກັນຂອງສະຖາບັນການສຶກສາຜູ້ໃຫຍ່ຂອງເຢຍລະມັນ (DIE) ແລະ ດີວີວີ ອິນເຕີເນເຊິນແນວ ຫ້ອງການຮ່ວມມືນາໆຊາດເພື່ອການສຶກສາຜູ້ໃຫຍ່ຂອງເຢຍລະມັນ. ໃນ 5 ພາກ, ໄດ້ອະທິບາຍທັກສະຕ່າງໆ ທີ່ຈຳເປັນ ເພື່ອນຳໄປສູ່ຄວາມສຳເລັດໃນການຮຽນ ແລະ ໃຫ້ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດຕົວຈິງ. ຈຸດປະສົງຫຼັກຂອງຫຼັກສູດ globALE ແມ່ນການສ້າງຄວາມອາດສາມາດ ຂອງຄູສອນ ຫຼື ຄູຝຶກໃນວຽກງານການສຶກສາຜູ້ໃຫຍ່.

ດີວີວີ ອິຈເຕີເນເຊິນແນວ ຮ່ວມມືກັບສະມາຄົມອາສເບ(ASPBAE), ມະຫາວິທະຍາໄລ ອາເອັມໄອທີ ທີ່ເມືອງເມວເບີນ, ປະເທດອົດສະຕຣາລີ ແລະ ຢູເນດສໂກ ບາງກອກ ກຳລັງຈັດຕັ້ງປະຕິບັດໂຄງການກະກຽມຄູຝຶກການສອນຜູ້ໃຫຍ່ ສຳລັບວຽກງານການສຶກສານອກໂຮງຮຽນ ສຳລັບຄູຝຶກການສອນຜູ້ໃຫຍ່ 36 ທ່ານ. ແຜນງານນີ້ຈັດຕັ້ງປະຕິບັດຕາມການນຳສະເໜີຂອງກົມການສຶກສານອກໂຮງຮຽນ, ກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ.

ດັ່ງທີ່ເຮົາຮູ້ວ່າ ຄວາມສະເໝີພາບລະຫວ່າງຍິງຊາຍ ແມ່ນໜຶ່ງໃນເປົ້າໝາຍການພັດທະນາແບບຍືນຍົງ. ເຊິ່ງໝາຍເຖິງ ສິດທິທີ່ເທົ່າທຽມກັນ, ຄວາມຮັບຜິດຊອບ ແລະ ໂອກາດ ຂອງແມ່ຍິງ ແລະ ຊາຍ ແລະ ເດັກຍິງ ແລະ ເດັກຊາຍ. ຄວາມສະເໝີພາບນັ້ນບໍ່ໄດ້ໝາຍເຖິງ ເພດຍິງ ແລະ ເພດຊາຍ ຈະກາຍມາເປັນຄືກັນ ແຕ່ມັນແມ່ນສິດທິ, ຄວາມຮັບຜິດຊອບ ແລະ ໂອກາດ ເຊິ່ງບໍ່ຂຶ້ນກັບວ່າພວກເຂົາຈະເກີດມາເປັນເພດຍິງ ຫຼື ເພດຊາຍ .

ໃນການຝຶກອົບຮົມຄັ້ງນີ້ເນັ້ນໜັກສະເພາະບົດບາດຍິງຊາຍໂດຍທົ່ວໄປ ແລະ ໃນການເຮັດວຽກ.

ຈຸດປະສົງຫຼັກຂອງການຝຶກອົບຮົມ ດັ່ງນີ້:

- ສ້າງຄວາມເຂົ້າໃຈກ່ຽວກັບຄຳວ່າ “ບົດບາດຍິງ-ຊາຍ” ແລະ ຄວາມແຕກຕ່າງທາງຊີວະວິທະຍາ
- ສ້າງຄວາມເຂົ້າໃຈ ກ່ຽວກັບຄວາມບໍ່ສະເໝີພາບຍິງ-ຊາຍ ແລະ ສາຍເຫດຂອງມັນ
- ປູກຈິດສຳນຶກຂອງຜູ້ເຂົ້າຮ່ວມສຳລັບຄວາມບໍ່ສະເໝີພາບຍິງ-ຊາຍໃນຊີວິດປະຈຳວັນ ແລະ ທັງໃນບ່ອນເຮັດວຽກ
- ອະທິບາຍແນວຄວາມຄິດ ຂອງການເຊື່ອມສານບົດບາດຍິງ-ຊາຍ ແລະ ໃຫ້ຮູ້ເຕັກນິກທີ່ເຂົາເຈົ້າສາມາດນຳໄປໃຊ້ໃນວຽກງານຂອງເຂົາເຈົ້າ ເພື່ອການປັບປຸງແກ້ໄຂບັນຫາບົດບາດຍິງ-ຊາຍ
- ເສີມຂະຫຍາຍຄວາມຮູ້ ຂອງຜູ້ເຂົ້າຮ່ວມກ່ຽວກັບວິທີການຮຽນຮູ້ຂອງຜູ້ໃຫຍ່ ໂດຍວິທີສັງເກດ ຜູ້ອຳນວຍຄວາມສະດວກ

ຜູ້ຊ່ຽວຊານດ້ານບົດບາດຍິງ-ຊາຍ ຈາກສະມາຄົມພັດະນາບົດບາດຍິງ-ຊາຍ ໄດ້ນຳສະເໜີແນວຄວາມຄິດຂອງ ການເຊື່ອມສານບົດບາດຍິງ-ຊາຍເຂົ້າໃນວຽກງານການສຶກສານອກໂຮງຮຽນ ແລະ  ການນຳໃຊ້ແນວຄວາມຄິດຂອງການຝຶກອົບຮົມບົດບາດຍິງ-ຊາຍ ເຊັ່ນ: ຮູ້ຄວາມແຕກຕ່າງຂອງເພດທີ່ມີມາແຕ່ກຳເນີດ ແລະ ສິ່ງທີ່ສັງຄົມກຳນົດໃຫ້ ໂດຍການນຳໃຊ້ຂໍ້ຄວາມເຊັ່ນ: “ຜູ້ຊາຍມີໜວດ ແລະ ແມ່ຍິງບໍ່ມີ” ຫຼື “ແມ່ຍິງມີຜົມຍາວ, ຜູ້ຊາຍມີຜົມສັ້ນ”. ຂໍ້ຄວາມເຫຼົ່ານີ້ຊ່ວຍໃຫ້ຜູ້ເຂົ້າຮ່ວມເຂົ້າໃຈພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ແລະ ຍິ່ງໄປກວ່ານັ້ນແມ່ນເກີດຄວາມເຂົ້າໃຈ ເຊິ່ງກັນ ແລະ ກັນ. ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (ສົນທິສັນຍາຊີດໍ CECAW) ໄດ້ຖືກນຳສະເໜີແກ່ຜູ້ເຂົ້າຮ່ວມ. ໃນສັນຍາໄດ້ກວມເອົາໃນທຸກຂົງເຂດໃນສັງຄົມ. ໃນລະດັບມະຫາພາກໄດ້ລະບຸໄວ້ວ່າ “ໂດຍເຊື່ອໝັ້ນວ່າ ການພັດທະນາຢ່າງເຕັມສ່ວນ ແລະ ຄົບຖ້ວນຂອງປະເທດໜຶ່ງ, ຄວາມຢູ່ດີ-ກິນດີ ຂອງໂລກ ແລະ ອຸດົມຄະຕິພາບນັ້ນ ຮຽກຮ້ອງໃຫ້ມີການເຂົ້າຮ່ວມຂອງແມ່ຍິງຫຼາຍທີ່ສຸດດ້ວຍເງື່ອນໄຂທີ່ສະເໝີພາບກັບເພດຊາຍໃນທຸກຂົງເຂດວຽກງານ”. ໃນລະດັບທ້ອງຖິ່ນ ໄດ້ລະບຸໄວ້ວ່າ “ບົດບາດແບບເກົ່າຂອງທັງຍິງ ແລະ ຊາຍຢູ່ໃນຄອບຄົວ ແລະ ສັງຄົມຈະຕ້ອງມີການປ່ຽນແປງ ເພື່ອບັນລຸເຖິງຄວາມສະເໝີພາບຢ່າງເຕັມສ່ວນລະຫວ່າງຍິງ ແລະ ຊາຍ”. ນອກຈາກນີ້ຜູ້ເຂົ້າຮ່ວມຍັງໄດ້ມີຄວາມເຂົ້າໃຈຕື່ມອີກກ່ຽວກັບການການຈຳແນກຕໍ່ແມ່ຍິງທັງໃນທາງກົງ ແລະ ທາງອ້ອມ.

ໃນມື້ສຸດທ້າຍຂອງການຝຶກອົບຮົມ ຜູ້ເຂົ້າຮ່ວມໄດ້ນຳໃຊ້ວິທີການຕົ້ນໄມ້ບັນຫາ ເພື່ອຫາສາຍເຫດ ແລະ ຄວາມເປັນມາຂອງບັນຫາ ພ້ອມທັງຫາວິທີທາງໃນການແກ້ບັນຫາ. ຮາກຕົ້ນໄມ້ແມ່ນສາຍເຫດ, ລຳຕົ້ນແມ່ນບັນຫາ ແລະ ໃບໄມ້ແມ່ນການແກ້ບັນຫາ. ຜູ້ເຂົ້າຮ່ວມມີຄວາມຫ້າວຫັນ ໃນການແລກປ່ຽນບົດຮຽນ ກ່ຽວກັບບັນຫາບົດບາດຍິງ-ຊາຍໃນ ສັງຄົມ ເຊັ່ນ ໃນຄອບຄົວ, ຊຸມຊົນ ແລະ ສະຖານທີ່ເຮັດວຽກ. ບັນຫາບົດບາດຍິງ-ຊາຍແມ່ນເລີ່ມມາຈາກຄອບຄົວ ແລະ ຮີດຄອງປະເພນີ. ການທີ່ຈະເຮັດໃຫ້ແມ່ຍິງມີຄວາມກະຕືລືລົ້ນມີສ່ວນຮ່ວມໃນສັງຄົມໂດຍບໍ່ມີຄວາມຢ້ານນັ້ນເປັນສິ່ງສຳຄັນຫຼາຍ.



Education for Everyone. Worldwide.
Lifelong.

# ພະລັງຄວາມສາມາດຂອງແມ່ຍິງ: ມີເຄັດລັບຄວາມສຳເລັດຫຼືບໍ່?

## ບົດຮຽນຈາກໂຄງການ ສ້າງຂີດຄວາມສາມາດຂອງແມ່ຍິງແບບປະສົມປະສານ Integrated Women's Empowerment Programme (IWEP) ໃນປະເທດ ເອທິໂອເປຍ

ຊອນຢ່າ ເບເລັດ, ດີວີວີ ອິນເຕີເນເຊິນແນວ, ເອທິໂອເປຍ



ມີການຂຽນ ແລະ ກ່າວເຖິງ ກ່ຽວກັບຫົວຂໍ້ ບົດບາດຍິງ-ຊາຍ ແລະ ໂດຍສະເພາະ ຫົວຂໍ້ທີ່ກ່ຽວກັບແມ່ຍິງ. ວິທີທີ່ຈະຊ່ວຍສະໜັບສະໜູນແມ່ຍິງ; ໃຫ້ພວກເຂົາມີໂອກາດເຂົ້າເຖິງຢ່າງເທົ່າທຽມ; ແລະ ທິດສະດີອື່ນໆ ແລະ ການສົນທະນາກໍຍັງດຳເນີນມາຈົນເຖິງປະຈຸບັນ. ພາຍຫຼັງການຈັດຕັ້ງປະຕິບັດດໂຄງການ IWEP ເຊິ່ງໝາຍເຖິງການເຂົ້າເຖິງແມ່ຍິງທີ່ທຸກຍາກ ແລະ ກືກໜັງສືໃນປະເທດ ເອທິໂອເປຍ, ເຮົາຈະມາແລກປ່ຽນກັນໃນບາງຫົວຂໍ້ ທີ່ສຳຄັນ ແລະ ບົດຮຽນຈາກການນຳສະເໜີນີ້.

ຖ້າຄຳຖາມທີ່ຄວນຈະຖາມ, ຖ້າມີເຄັດລັບຄວາມສຳເລັດສຳລັບການສ້າງຂີດຄວາມອາດສາມາດໃຫ້ແມ່ຍິງ, ຈະໄດ້ຄຳຕອບທີ່ຫຼາກຫຼາຍ ແລະ ຈະໄດ້ຮູ້ເຄັດລັບ. ຕາມປະສົບການຂອງພວກເຮົາ ການລວມກັນຂອງ 3 ອົງປະກອບຫຼັກ ແບບປະສົມປະສານເຮັດໃຫ້ໂຄງການມີຄວາມສຳເລັດ. ໂຄງການ IWEP ປະກອບດ້ວຍການຮູ້ໜັງສືຂອງຜູ້ໃຫຍ່ (ໂດຍຜ່ານວິທີການຮຽນຮູ້ຫຼາກຫຼາຍຮູບແບບຂອງຜູ້ໃຫຍ່ ແລະ ຣີເຟລັກ Reflect), ການຝຶກອົບຮົມທັກສະຊີວິດ(ທີ່ກ່ຽວຂອງກັບຕະຫຼາດ) ແລະ ການເປັນຜູ້ປະກອບການ. ການສະໜັບສະໜູນໃນຮູບແບບການຝຶກອົບຮົມທັກສະທາງທຸລະກິດ, ການໃຫ້ບໍລິການສະໜັບສະໜູນທາງທຸລະກິດ ແລະ ການເຂົ້າເຖິງສິນເຊື່ອໂດຍຜ່ານການຝາກປະຢັດ ແລະ ການຄ້ຳປະກັນໂດຍຜ່ານກອງທຶນຂອງໂຄງການ IWEP. ວຽກງານການປະສົມປະສານບໍ່ແມ່ນວຽກງ່າຍ ແລະ ມັນຕ້ອງໄດ້ຈັດຕັ້ງປະຕິບັດກັນໃນທຸກລະດັບຂອງການດຳເນີນງານ (ລວມທັງປຶ້ມແບບຮຽນ, ການຝຶກອົບຮົມຜູ້ຊ່ຽວຊານ ແລະ ຜູ້ອຳນວຍຄວາມສະດວກ ແລະ ອື່ນໆ), ແຕ່ໃນທ້າຍສຸດແລ້ວ ການປະສົມປະສານທັງ 3 ອົງປະກອບ ຈະໄດ້ຜົນຄືການລົບລ້າງຄວາມທຸກຍາກ ໃຫ້ແມ່ຍິງຫຼາຍກວ່າ 1,000 ຄົນ. ພ້ອມກັນນັ້ນ ຫົວຂໍ້ທັກສະຊີວິດພົວພັນເຖິງຫຼັກສູດການຮູ້ໜັງສືຂອງຜູ້ໃຫຍ່ສາມາດແກ້ບັນຫາດ້ານອື່ນໆຂອງຊີວິດແມ່ຍິງ ແລະ ຊ່ວຍໃຫ້ພວກເຂົາຮັບມືກັບບັນຫາພາຍໃນຄອບຄົວ ແລະ ໃນລະດັບຊຸມຊົນ.



ປະຈຸບັນນີ້ 4 ປີ ພາຍຫຼັງສິ້ນສຸດໂຄງການ, ກຸ່ມແມ່ຍິງກໍຍັງສືບຕໍ່ພົບປະກັນ, ມີການທ້ອນ, ການໃຫ້ຢືມ ແລະ ການຢືມເງິນ ແລະ ມີສ່ວນຮ່ວມໃນກິດຈະກຳການສ້າງລາຍໄດ້. ການຮູ້ໜັງສືໃຫ້ໂອກາດພວກເຂົາໃນການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການເຮັດທຸລະກິດ ແລະ ຍ້ອນທັກສະ ໃນການ ຄິດໄລ່ ເຮັດໃຫ້ພວກເຂົາຮູ້ຈັກການຈົດບັນທຶກກິດຈະກຳຂອງພວກເຂົາ. ເຖິງຢ່າງໃດກໍຕາມ, ໃນບັນດາບົດຮຽນເຫຼົ່ານີ້ ມີສອງປັດໄຈທີ່ເປັນສ່ວນສຳຄັນຫຼາຍທີ່ສຸດໃນການເຮັດໃຫ້ໂຄງການນີ້ມີຄວາມຍືນຍົງ ດັ່ງຕໍ່ໄປນີ້:

- ການເຮັດວຽກເປັນກຸ່ມ: ແມ່ຍິງຖືກຈັດເປັນກຸ່ມ 25 ຄົນ ເພື່ອເຂົ້າຫ້ອງຮຽນ ແລະ ຝຶກອົບຮົມຮ່ວມກັນ. ພວກເຂົາຮູ້ຈັກແລະ ລຶ້ງເຄີຍກັນ ແລະ ເຖິງວ່າຈະມີການຂັດແຍ່ງກັນໃນບາງຄັ້ງ, ພວກເຂົາກໍມີຄວາມຜູກພັນກັນ ແລະ ສະໜັບສະໜູນກັນ ໂດຍການສະໜັບສະໜູນທັງສະເພາະບຸກຄົນ ແລະ ທຸລະກິດ. ພວກເຂົາດຳເນີນກິດຈະການພາຍໃນກຸ່ມ ແລະ ມີຄວາມເຊື່ອໝັ້ນເພີ່ມຂຶ້ນ, ແຍກໂຕອອກ ແລະ ເລີ່ມເຮັດທຸລະກິດຂອງໂຕເອງ ຫຼື ເຮັດວຽກໃນກຸ່ມທີ່ນ້ອຍລົງ 2-5 ຄົນ.
- ແຜນການຝາກປະຢັດ ແລະ ການກູ້ຢືມ: ແທນທີ່ຈະເປັນສະເໜີເງິນໃຫ້ຢືມ ໃຫ້ແມ່ຍິງເລີ່ມຕົ້ນທຸລະກິດຂອງພວກເຂົາ, ໂຄງການ IWEP ສະເໜີໃຫ້ຜູ້ທີ່ຈະຢືມເງິນ ມາຝາກເງິນກ່ອນຈົນຮອດປີ - ເພື່ອເປັນຫຼັກປະກັນວ່າຜູ້ຈະກູ້ຢືມເງິນມີຄຸນນະສົມບັດພຽງພໍ. ກອງທຶນເຫຼົ່ານີ້ມີການເພີ່ມທຶນ ຈາກການທີ່ພວກເຂົາສາມາດຢືມ ແລະ ຄືນເງິນພ້ອມດອກເບ້ຍ, ເພື່ອຊ່ວຍໃຫ້ພວກເຂົາໄດ້ເຮັດທຸລະກິດທີ່ໃຫຍ່ຂຶ້ນ.

ການເພີ່ມຂີດຄວາມສາມາດ ສາມາດສ້າງຄວາມເຊື່ອໝັ້ນໂດຍອີງຕາມທັກສະທີ່ໄດ້ຮຽນມາ, ການສະໜັບສະໜູນຈາກກຸ່ມ, ມີຄວາມຮູ້ສຶກວ່າຈະສາມາດເບິ່ງແຍງຄົນອື່ນໄດ້ ແລະ ມີຈຸດຢືນຢູ່ໃນຄົວເຮືອນ, ໃນສັງຄົມ ແລະ ຊີວິດມີຄວາມຫວັງ.

Education for Everyone. Worldwide.
Lifelong.

# ບົດໃຫ້ສຳພາດຂອງທ່ານ ຈ໊ອຕ (Christoph Jost)

## ຜູ້ອຳນວຍການໃຫຍ່ ຫ້ອງການ ດີວີວີ ອິນເຕີເນເຊີນແນວ

1. ທ່ານ ຈ໊ອຕ, ຂ້າພະເຈົ້າໄດ້ຮູ້ມາວ່າທ່ານເຄີຍເປັນນັກຮຽນຝຶກງານຢູ່ທະນາຄານ. ທ່ານຊ່ວຍເລົ່າກ່ຽວກັບຄວາມເປັນມາຈາກທີ່ເປັນນັກຮຽນຝຶກງານ ກ້າວມາຮອດຜູ້ອຳນວຍການໃຫຍ່ ຫ້ອງການ ດີວີວີ ອິນເຕີເນເຊີນແນວ?
*ພາຍຫຼັງການເປັນນັກຮຽນຝຶກງານຢູ່ທະນາຄານ, ຂ້າພະເຈົ້າໄດ້ໃຊ້ເວລາໃນການເດີນທາງ 2-3 ເດືອນ ຜ່ານໄປທາງປະເທດແມັກຊິໂກ ແລະ ກົວເຕມາລາ ເຊິ່ງຢູ່ທີ່ນັ້ນ ຂ້າພະເຈົ້າໄດ້ຮຽນພາສາສະເປັນ (ເອັດສະປາຍ). ອີງຕາມປະສົບການທີ່ຂ້າພະເຈົ້າໄດ້ຮຽນວິຊາກ່ຽວກັບປະເທດລາຕິນອາເມລິກາ ແລະ ຕໍ່ມາແມ່ນການບາດກ້າວເຂົ້າສູ່ການພົວພັນສາກົນ. ຂ້າພະເຈົ້າເຮັດວຽກ 6 ປີ ເປັນທີ່ປຶກສາດ້ານການພັດທະນາ, ເຊິ່ງສ່ວນຫຼາຍແມ່ນເນັ້ນໜັກໄປດ້ານການເງິນ ແລະ ແຜນພັດທະນາເສດຖະກິດສັງຄົມ ແລະ ການຕິດຕາມ. ໃນໄລຍະການເຮັດວຽກ 6 ປີກ່ອນຫຼັງ ຂ້າພະເຈົ້າໄດ້ເຮັດວຽກທີ່ ອົງການແລກປ່ຽນທາງວິຊາການຂອງເຢຍລະມັນ (DAAD) ເຊິ່ງເປັນການປູ່ນໂສມໜ້າຂອງຂ້າພະເຈົ້າກ່ຽວກັບການສຶກສາ. ດັ່ງນັ້ນ, ຕຳແໜ່ງໃໝ່ຂອງຂ້າພະເຈົ້າທີ່ຫ້ອງການ ດີວີວີ ອິນເຕີເນເຊີນແນວ ແມ່ນຊ່ວຍໃຫ້ຂ້າພະເຈົ້ານຳເອົາປະສົບການໃນດ້ານການລຶບລ້າງຄວາມທຸກຍາກ ແລະ ການສຶກສາມາໃຊ້ຮ່ວມກັນ. ນີ້ຫວັງວ່າຈະເປັນວິທີການອະທິບາຍໂດຍສະເພາະຈາກທະນາຄານ ເຖິງການສຶກສາຜູ້ໃຫຍ່.*

2. ທ່ານມາຢ້ຽມຢາມ ສປປ ລາວ ຄັ້ງທຳອິດ ຕອນໃດ ແລະ ທ່ານມີຄວາມປະທັບໃຈແນວໃດ?
*ຂ້າພະເຈົ້າມາຄັ້ງທຳອິດແມ່ນ ປີ 2008, ເພື່ອຈັດການລະບົບການຕິດຕາມສຳລັບໂຄງການໂຄງລ່າງພື້ນຖານໃນເຂດຊົນນະບົດ ເຊິ່ງເປັນການເຮັດວຽກກັບກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ເຮັດວຽກຮ່ວມກັບໜ່ວຍງານທີ່ແຂວງບໍ່ແກ້ວ ແລະ ຫຼວງນ້ຳທາ. ຄວາມປະທັບໃຈຄັ້ງທຳອິດຂອງຂ້າພະເຈົ້າສ່ວນໃຫຍ່ແມ່ນກ່ຽວຂ້ອງກັບຄວາມງາມຂອງທຳມະຊາດ ເຊັ່ນດຽວກັບຄວາມສຸພາບ ແລະ ເປັນມິດຂອງຄົນລາວ. ທັງໝົດໃນການເຮັດວຽກ 6 ເດືອນ ໃນ ສປປ ລາວ ຂ້າພະເຈົ້າກໍໄດ້ມີໂອກາດເດີນທາງໄປຢ້ຽມຢາມຫຼາຍແຫ່ງ.*



ໃຫ້ຄຳເຫັນ
ໃນກອງປະຊຸມ
ນະໂຍບາຍການສຶກສາ
ທີ່ ບາງກອກ

3. ໃນຄວາມເຫັນຂອງທ່ານ: ໂຄງການໃດແມ່ນໂຄງການທີ່ເລັ່ງດ່ວນທີ່ສຸດ ໃນປະຈຸບັນນີ້?
*ຂ້າພະເຈົ້າບໍ່ຕ້ອງການທີ່ຈະກ່າວເຖິງແຕ່ບາງໂຄງການ ເພາະວ່າແຕ່ລະໂຄງການແມ່ນມີຄວາມຕ້ອງການທີ່ແຕກຕ່າງກັນໃນແຕ່ລະພາກພື້ນ. ໃນຂະແໜງພັດທະນາ ປະຈຸບັນນີ້ເວົ້າເຖິງບັນຫາຜູ້ລີ້ໄພຫຼາຍ ແລະ ວິທີການປ້ອງກັນການຫຼົບໜີ ແລະ ການອົບພະຍົບໃນອະນາຄົດ. ເຖິງຢ່າງໃດກໍຕາມ, ນີ້ບໍ່ສົ່ງຜົນກະທົບຫຍັງກັບທຶນ ແລະ ກິດຈະກຳໃນພາກພື້ນອື່ນ. ພວກເຮົາມີຄວາມຕ້ອງການລົງທຶນກ່ຽວກັບແນວທາງໃໝ່ ດ້ານສັງຄົມ, ເສດຖະກິດ ແລະ ການເມືອງ ເພີ່ມຂີດຄວາມອາດສາມາດໃຫ້ທຸກຄົນໃຫ້ມີຄວາມພູມໃຈໃນຊີວິດ ແລະ ມີຄວາມສະຫງົບ. ຂ້າພະເຈົ້າເຊື່ອວ່າການສຶກສາຜູ້ໃຫຍ່ ແລະ ການຮຽນຮູ້ຕະຫຼອດຊີວິດ ແມ່ນມີບົດບາດສຳຄັນໃນວຽກງານທັງໝົດນີ້.*

4. ຂະແໜງການໃດທີ່ທ່ານຄິວ່າ ດີວີວີ ອິນເຕີເນເຊີນແນວຄວນຈະເນັ້ນໜັກຕື່ມໃນອະນາຄົດ?
*ປະຈຸບັນແມ່ນເນັ້ນໜັກການສົ່ງເສີມສູນການຮຽນຮູ້ຊຸມຊົນ ໃຫ້ມີຄວາມເຂັ້ມແຂງ. ເຊິ່ງເປັນບູລິມະສິດຮ່ວມກັບ ຄູ່ຮວມພັດທະນາ, ພາກລັດຖະບານ ແລະ ໃນລະດັບທ້ອງຖິ່ນ. ສູນການຮຽນຮູ້ຊຸມຊົນຍັງມີຄວາມຕ້ອງການ, ຕ້ອງການທຶນ ແລະ ການປະຊາສຳພັນທີ່ມີປະສິດທິພາບ. ໃນສູນການຮຽນຮູ້ຊຸມຊົນຈະມີບໍລິການທີ່ຫຼາກຫຼາຍສຳລັບທຸກຄົນໃນຊຸມຊົນ: ຫ້ອງຮຽນໜັງສື, ການສຶກສາຂັ້ນພື້ນຖານ, ການຮຽນຮູ້ອື່ນໆ ແລະ ໂອກາດທາງສັງຄົມເຊັ່ນດຽວກັບການຫຼິ້ນກິລາ ແລະ ການແລກປ່ຽນວັດທະນະທຳ. ເຖິງຢ່າງໃດກໍຕາມ, ການສົ່ງເສີມສູນການຮຽນຮູ້ຊຸມຊົນໃຫ້ມີຄວາມຍືນຍົງແມ່ນຂຶ້ນກັບຊັບພະຍາກອນບຸກຄົນ ເຊັ່ນ ຄູອາຈານ ແລະ ບຸກຄະລາກອນບໍລິຫານ ໄດ້ຮັບການຝຶກອົບຮົມມາຢ່າງເໝາະສົມ ແລະ ມີໂຄງຮ່າງການຈັດຕັ້ງຈະຕ້ອງໄດ້ຮັບການປັບປຸງ.*

5. ແມ່ນຫຍັງຄືຄວາມຄາດຫວັງຂອງທ່ານໃນອີກ ສິບປີຕໍ່ໜ້າ?
*ສິ່ງທ້າທາຍແມ່ນມີຫຼາຍ. ດັ່ງທີ່ໄດ້ເວົ້າມາແຕ່ທຳອິດ, ບັນຫາສຳຄັນແມ່ນການໂນ້ມນ້າວຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາ ກ່ຽວກັບຄວາມສຳຄັນຂອງການສຶກສາຜູ້ໃຫຍ່. ຂັ້ນຕອນຕໍ່ໄປກໍຄືການຂອດປະສານງານທີ່ສຳຄັນ ເຊັ່ນ ການລຶບລ້າງຄວາມທຸກຍາກ ແລະ ການໃຫ້ໂອກາດກຸ່ມດ້ອຍໂອກາດ, ມັນມີຫຼາຍເຫດຜົນສຳລັບການຮຽນຮູ້ຕະຫຼອດຊີວິດ: ເທັກໂນໂລຢີໃໝ່ໆ, ສັງຄົມຜູ້ສູງອາຍຸ, ໂລກທີ່ມີການແຂ່ງກັນ ແລະ ການຍົກຍ້າຍຖິ່ນຖານ ນີ້ແມ່ນພຽງສ່ວນນ້ອຍ.*

6. ແມ່ນຫຍັງແມ່ນສິ່ງສຳຄັນເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ?
*ພວກເຮົາຕ້ອງໄດ້ປັບປຸງການສະໜັບສະໜຸນ ແລະ ການໂນ້ມນ້າວ; ເອົາວຽກງານການສຶກສາຜູ້ໃຫຍ່ເຂົ້າໃນວາລະທາງການເມືອງ. ເຮົາຈຳເປັນຕ້ອງໃຫ້ຂໍ້ມູນເພີ່ມເຕີມ ແລະ ຫຼັກຖານກ່ຽວກັບຜົນໄດ້ຮັບ ແລະ ໝາກຜົນຂອງກິດຈະກຳພວກເຮົາ. ພວກເຮົາຕ້ອງເຮັດໃຫ້ຈະແຈ້ງວ່າກິດຈະກຳການສຶກສາຜູ້ໃຫຍ່ ບໍ່ໄດ້ມີຄວາມຕ່າງ ແຕ່ມັນເຊື່ອມໂຍງກັບຈຸດປະສົງການພັດທະນາ ເຊັ່ນ ສຸຂະພາບ, ການຈ້າງງານ ແລະ ບົດບາດຍິງ-ຊາຍ. ເປົ້າການການພັດທະນາແບບຍືນຍົງເປັນຈຸດເລີ່ມຕົ້ນທີ່ດີ ແຕ່ພວກເຮົາຕ້ອງການການສະໜັບສະໜູນ ແລະ ຂໍ້ກຳນົດທີ່ເປັນຄວາມຈິງ, ຕົວເລກ ແລະ ການສະໜັບສະໜູນທາງການເມືອງ. ນີ້ສາມາດເຂົ້າເຖິງໄດ້ສະເພາະໃນຂອດການປະສານງານ ແລະ ການເຮັດວຽກກັບຄູ່ຮ່ວມພັດທະນາຂອງພວກເຮົາໃນທົ່ວໂລກ.*

# ກອງປະຊຸມການສຶກສາສຳລັບການພັດທະນາແບບຍືນຍົງ ໂດຍຜ່ານສູນການຮຽນຮູ້ຊຸມຊົນ ທີ່ແຂວງຮົວບິນ, ປະເທດຫວຽດນາມ

*ປີ ວັນນາ, ດິວິວີ ອິນເຕີເນເຊິນແນວ, ກຳປູເຈຍ*

ການສຶກສາສຳລັບການພັດທະນາແບບຍືນຍົງ ແມ່ນຫົວຂໍ້ໃໝ່ສຳລັບທຸກຄົນ. ສູນການຮຽນຮູ້ຊຸມຊົນແມ່ນ ມີບົດບາດສຳຄັນກ່ຽວກັບຫົວຂໍ້ນີ້.

ເພື່ອໃຫ້ເປັນເຊັ່ນນັ້ນ, ສູນການຮຽນຮູ້ຊຸມຊົນຈະຕ້ອງມີຄວາມຍືນຍົງ. ທົ່ວທັງຊຸມຊົນຈະຕ້ອງເຂົ້າໃຈເຖິງ ປະໂຫຍດຂອງສູນການຮຽນຮູ້ຊຸມຊົນ. ຍິ່ງໄປກວ່ານັ້ນ, ພວກເຂົາເຈົ້າຕ້ອງເຂົ້າໃຈວ່າສູນການຮຽນຮູ້ຊຸມຊົນບໍ່ແມ່ນຂອງລັດຖະບານ ຫຼື ຂອງອົງການຈັດຕັ້ງທີ່ບໍ່ຂຶ້ນກັບ ລັດຖະບານ, ແຕ່ມັນແມ່ນຂອງຊາວບ້ານທຸກຄົນ. ລັດຄວນສະໜັບສະໜູນ ແລະ ສົ່ງເສີມຄະນະກຳມະການ ແລະ ຊຸກຍູ້ໃຫ້ພວກເຂົາມີຄວາມສາມາດເພື່ອຈະເຮັດໃຫ້ສູນການຮຽນຮູ້ຊຸມຊົນມີຄວາມຍືນຍົງ.

ພວກເຮົາຈະເຮັດແນວໃດ ໃຫ້ປະຊາຊົນຮັບຮູ້ວ່າມີສູນການຮຽນຮູ້ຊຸມຊົນຢູ່ໃນຊຸມຊົນພວກເຂົາ?

ໃນບົດນຳສະເໜີຂອງ ທ່ານ ສຈ. ດຣ. ກິອິຈິ ໂອຢາສຸ (Prof. Dr. Kiichi Oyasu) ຈາກມະຫາວິທະຍາໄລ ໂອກາຢາມາ (Okayama University) ຂອງປະເທດຍີ່ປຸ່ນ ໄດ້ແລກປ່ຽນກ່ຽວກັບວິທີການທີ່ພົ້ນເດັ່ນໃນການ ປຸກລະດົມປະຊາຊົນເຂົ້າມາມີສ່ວນຮ່ວມໃນ ໂກມິນກັງ (KOMIKAN) ເຊິ່ງຕັ້ງຢູ່ແຂວງໂອກາຢາມາ ເຊັ່ນດຽວ ກັບການສົ່ງເສີມການສຶກສາສຳລັບການພັດທະນາແບບຍືນຍົງ ໂດຍຜ່ານຊຸມຊົນ, ທ່ານເນັ້ນໜັກ ກ່ຽວກັບຄະນະສູນການຮຽນຮູ້ຊຸມຊົນ ຈະຕ້ອງມີຄວາມຮູ້ກ່ຽວກັບທັກສະພິເສດ, ໂດຍສະເພາະທັກສະການສື່ສານ, ພວກເຂົາຕ້ອງຈິງໃຈ ແລະ ສະຫຼະເວລາໃຫ້ກັບສູນການຮຽນຮູ້ຊຸມຊົນ. ໂອກາດການສຶກສາທີ່ມີຄຸນນະພາບ ແລະ ການຮຽນຮູ້ຕະຫຼອດຊີວິດຕ້ອງປັບຈຸເຂົ້າໃນລະບົບການສຶກສາແຫ່ງຊາດ ແລະ ການພັດທະນາ. ມີຜູ້ຕາງໜ້າເຂົ້າຮ່ວມຈາກຫຼາຍພາກສ່ວນ ທີ່ໄດ້ນຳສະເໜີບົດຮຽນທີ່ພົ້ນເດັ່ນ, ສິ່ງທ້າທາຍ ແລະ ແລກປ່ຽນປະສົບການ ແລະ ວິທີການແກ້ບັນຫາ ຈາກລະດັບທ້ອງຖິ່ນຈົນເຖິງລະດັບປະເທດ.

ພາຍຫຼັງກອງປະຊຸມນີ້ທຳອິດ, ຜູ້ເຂົ້າຮ່ວມ ເຊິ່ງເປັນຕົວແທນຂອງນັກຮຽນຮູ້, ຄູອາຈານ, ຜູ້ອຳນວຍຄວາມສະດວກ ແລະ ຜູ້ບໍລິຫານສູນການຮຽນຮູ້ຊຸມຊົນ ຈາກ 10 ແຂວງໃນປະເທດຫວຽດນາມ, ກະຊວງສຶກສາທິການ ແລະ ການຝຶກອົບຮົມ, ສະຖາບັນຄົ້ນຄວ້າ, ຢູເນດສະໂກ ແລະ ຜູ້ເຂົ້າຮ່ວມຈາກ ສປປ ລາວ ແລະ ກຳປູເຈຍ ໄດ້ໃຫ້ຄຳໝັ້ນສັນຍາຮ່ວມກັນວ່າຈະສືບຕໍ່ ແລະ ເສີມຂະຫຍາຍວຽກງານການສຶກສາສຳລັບການພັດທະນາແບບຍືນຍົງ ຜ່ານການຮຽນຮູ້ຕະຫຼອດຊີວິດ. ບາງຄຳໝັ້ນສັນຍາທີ່ສຳຄັນທີ່ໄດ້ຍົກຂຶ້ນມາໂດຍຜູ້ເຂົ້າຮ່ວມ:

- ປູກຈິດສຳນຶກກ່ຽວກັບການສະໜັບສະໜູນໃຫ້ເຫັນຄວາມສຳຄັນຂອງການສຶກສາສຳລັບການພັດທະນາແບບຍືນຍົງ ໃນສູນການຮຽນຮູ້ຊຸມຊົນ ແລະ ບົດບາດຂອງສູນການຮຽນຮູ້ຊຸມຊົນ ໃນການສົ່ງເສີມການສຶກສາສຳລັບການພັດທະນາແບບຍືນຍົງ.
- ຊຸກຍູ້ໃຫ້ຊຸມຊົນເປັນເຈົ້າການ ແລະ ສ້າງໂຄງຮ່າງທີ່ເໝາະສົມສຳລັບການບໍລິຫານແບບຍືນຍົງ ແລະ ການດຳເນີນງານຂອງສູນການຮຽນຮູ້ຊຸມຊົນ.
- ພັດທະນາຄວາມສາມາດໃຫ້ໄດ້ລະດັບມືອາຊີບ ເພື່ອເປັນການເພີ່ມປະສິດທິພາບໃນການເຮັດວຽກຂອງການສຶກສາເພື່ອການພັດທະນາແບບຍືນຍົງໂດຍຜ່ານສູນການຮຽນຮູ້ຊຸມຊົນ.
- ສ້າງຊຸມຊົນໃນການແກ້ໄຂບັນຫາຍືນຍົງສຳລັບບັນຫາທີ່ໄດ້ນຳສະເໜີໂດຍສະມາຊິກໃນຊຸມຊົນ ເຊັ່ນ ບັນຫາສະພາບດິນຟ້າອາກາດ,




ຄວາມຫຼາກຫຼາຍທາງຊີວະນາໆພັນ, ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ການຮັບມື ແລະ ການຫຼຸດຄວາມສ່ຽງໄພພິບັດ.

- ເພີ່ມທະວີການຮ່ວມມື ກັບຄູ່ຮ່ວມພັດທະນາ ເພື່ອລະດົມຊັບພະຍາກອນຈາກຊຸມຊົນ, ພາກເອກະຊົນ ແລະ ໃນທ້ອງຖິ່ນ, ໃນລະດັບປະເທດ ແລະ ສາກົນ ເພື່ອການສົ່ງເສີມການສຶກສາສຳລັບການພັດທະນາແບບຍືນຍົງ ໂດຍຜ່ານສູນຮຽນຮູ້ຊຸມຊົນ (ລວມທັງຄົນ, ອຸປະກອນ ແລະ ທຶນ).
- ສະໜັບສະໜູນ ແລະ ແບ່ງປັນບົດຮຽນກ່ຽວກັບການສຶກສາສຳລັບການພັດທະນາແບບຍືນຍົງ ໃນລະດັບທ້ອງຖິ່ນ ໂດຍຜ່ານເຄືອຂ່າຍໃນບໍລິບົດຂອງການຮຽນຮູ້ຕະຫຼອດຊີວິດສຳລັບທຸກຄົນ (ເດັກນ້ອຍ, ຊາວໜຸ່ມ, ຜູ້ໃຫຍ່ ຜູ້ສູງອາຍຸ ແລະ ຜູ້ດ້ອຍໂອກາດ).

ເພື່ອເປັນການສົ່ງເສີມການສຶກສາສຳລັບການພັດທະນາແບບຍືນຍົງ ໃນລະດັບ ທ້ອງຖິ່ນ ແລະ ສ້າງບົດບາດຂອງສູນການຮຽນຮູ້ຊຸມຊົນໃນການສົ່ງເສີມ ການຮຽນຮູ້ຕະຫຼອດຊີວິດ ຫຼື ສ້າງສັງຄົມແຫ່ງການຮຽນຮູ້ ຫຼື ການພັດທະນາແບບຍືນຍົງ, ຜູ້ເຂົ້າຮ່ວມໄດ້ໃຫ້ຄຳແນະນຳແກ່ພາກສ່ວນລັດຖະບານ ແລະ ຜູ້ນຳໃນລະດັບທ້ອງຖິ່ນ ໃນທຸກລະດັບດັ່ງລຸ່ມນີ້:

- ສ້າງຄວາມເຂົ້າໃຈ ໃຫ້ກັບປະຊາຊົນກ່ຽວກັບບົດບາດ ແລະ ຄວາມສຳຄັນຂອງສູນການຮຽນຮູ້ຊຸມຊົນສຳລັບການຮຽນຮູ້ຕະຫຼອດຊີວິດສຳລັບທຸກຄົນ ແລະ ການພັດທະນາຊຸມຊົນແບບຍືນຍົງ.
- ປັບປຸງກົດໝາຍພື້ນຖານ/ກົດລະບຽບ ແລະ ນະໂຍບາຍທີ່ເໝາະສົມສຳລັບການສ້າງຄວາມເຂັ້ມແຂງ ແລະ ຄວາມຍືນຍົງຂອງສູນການຮຽນຮູ້ຊຸມຊົນ.

*ອ່ານຕໍ່ໜ້າ 9*

Education for Everyone. Worldwide. Lifelong.

# ໂລກທີ່ບໍ່ມີການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່

ສະຖາບັນຢູເນດສະໂກສຳລັບການຮຽນຮູ້ຕະຫຼອດຊີວິດ(UIL) ໄດ້ຕີພິມລາຍງານໂລກກ່ຽວກັບການຮຽນຮູ້ ແລະ ການສຶກສາ ຜູ້ໃຫຍ່(GRALE III) ໃນເດືອນກັນຍາ ທີ່ຜ່ານມາ. ໃນບົດລາຍງານໄດ້ສະແດງໃຫ້ເຫັນ ພາບລວມກ່ຽວກັບຜົນສຳເລັດ ໃນປະຈຸບັນ ແລະ ສິ່ງທ້າທາຍໃນຂະແໜງການຂອງພວກເຮົາ. ຈົດໝາຍຂ່າວຂອງ ດີວີວີ ອິນເຕີເນຊັ່ນແນວຈະໄດ້ ຈັດພິມຜົນການຄົ້ນຄວ້າທີ່ໜ້າສົນໃຈໃນສະບັບຕໍ່ໄປ.

ໃນຕອນສຸດທ້າຍຂອງບົດລາຍງານ ຢູເນດສະໂກໄດ້ແຕ້ມຮູບຂອງໂລກທີ່ບໍ່ມີການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ (ALE):

ໂລກທີ່ບໍ່ມີ ALE ຈະເປັນຕົວແທນການປະຕິເສດຂອງສິດທິທາງການສຶກສາ. ມັນຈະທຳລາຍຄວາມຍຸດຕິທຳໃນສັງຄົມ, ກີດກັ້ນຜູ້ໃຫຍ່ທີ່ບໍ່ໄດ້ຮັບການສຶກສາຂັ້ນພື້ນຖານ ແລະ ໄດ້ອອກຈາກໂຮງຮຽນໂດຍທີ່ບໍ່ມີທັກສະພື້ນຖານ ແລະ ຮູ້ໜັງສື. ມັນຈະຈຳກັດໂອກາດ ແລະ ຄວາມສະເໝີພາບຂອງຜູ້ໃຫຍ່ໃນການດຳລົງຊີວິດ. ນອກນັ້ນ ມັນຍັງເປັນຕົວແທນຂອງຄວາມບໍ່ຍືນຍົງສຳລັບຊາວໜຸ່ມຜູ້ທີ່ຈະໄດ້ຮັບປະໂຫຍດຈາກການລົງທຶນທາງການສຶກສາ. ຍິ່ງໄປກວ່ານັ້ນ, ໂລກທີ່ບໍ່ມີ ALE ຈະໄປຫຼຸດຄຸນຄ່າຂອງການສຶກສາ ເຊິ່ງເປັນເຄື່ອງມືທາງສັງຄົມ, ການເມືອງ, ວັດທະນະທຳ ແລະ ການຂະຫຍາຍໂຕຂອງເສດຖະກິດ. ມັນຈະປະຕິເສດຄວາມສາມາດຂອງຄົນ. ມັນຈະບໍ່ສົນໃຈການຈະເລີນເຕີບໂຕຂອງຫຼັກຖານທາງວິທະຍາສາດ ທີ່ສະແດງວ່າຄົນສາມາດຮຽນ ແລະ ມີສ່ວນຮ່ວມໃນສັງຄົມ ແລະ ເສດຖະກິດໃນຕະຫຼອດຊີວິດພວກເຂົາ (ອີງການເພື່ອການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ).

ສົມທຽບສັງຄົມ 'ALE-ທີ່ຮັ່ງມີ', 'ALE-ທີ່ທຸກຍາກ' ຈະເຫັນໄດ້ລັກສະນະ ດັ່ງນີ້:

1. ຜູ້ໃຫຍ່, ຊຸມຊົນ ແລະ ອົງກອນ ຈະບໍ່ສາມາດປັບໂຕ ແລະ ປ່ຽນແປງໄດ້. ຜູ້ອອກແຮງງານຈະພົບຄວາມຫຍຸ້ງຍາກໃນການປ່ຽນວຽກ ຫຼື ປ່ຽນອາຊີບ, ເຮັດໃຫ້ຕະຫຼາດແຮງງານບໍ່ມີປະສິດທິພາບ. ຜູ້ອອກແຮງງານ ຈະບໍ່ມີຄວາມສຸກໃນການເຮັດວຽກ, ຕໍ່ຕ້ານການປ່ຽນແປງຂອງເຕັກໂນໂລຊີ ແລະ ຢ້ານກົວຕໍ່ນະວັດຕະກຳ.
2. ຜູ້ໃຫຍ່ຈະບໍ່ມີຄວາມສາມາດເບິ່ງແຍງໂຕເອງໄດ້ ແລະ ຄວາມເປັນຢູ່ທີ່ດີທາງຮ່າງກາຍ ແລະ ຈິດໃຈພວກເຂົາ. ພວກເຂົາຈະບໍ່ຮັບຜິດຊອບຕໍ່ການເບິ່ງແຍງສຸຂະພາບ ແລະ ການພັດທະນາຂອງລູກເຂົາເຈົ້າ. ຄຸນຄ່າ ແລະ ພູມໃຈໃນຕົນເອງຂອງພວກເຂົາຕໍ່າເຮັດໃຫ້ເກີດຊ່ອງຫວ່າງ, ເຊິ່ງຈະກະຕຸ້ນໃຫ້ເກີດພຶດຕິກຳສ່ຽງ.
3. ຜູ້ໃຫຍ່ ແລະ ຊຸມຊົນ ຈະບໍ່ເປີດໃຈກັບຄົນອື່ນ, ແລະ ຢ້ານຄົນພາຍນອກ ແລະ ຄວາມໃຈແຄບຈະເພີ່ມຂຶ້ນ. ຄົນຈະມີໂອກາດໜ້ອຍໃນການເຊື່ອມຕໍ່ກັບການຮຽນຮູ້ກັບບຸກຄົນພາຍນອກ. ສັງຄົມຈະບໍ່ມີຄວາມກົມກຽວກັນ.
4. ຜູ້ໃຫຍ່ຈະເອື່ອຍອີງຄອບຄົວ ຫຼື ອົງການຈັດຕັ້ງຫຼາຍຂຶ້ນ ນຳໄປສູ່ຄວາມບໍ່ເຂົ້າໃຈກັນໃນຄອບຄົວ ແລະ ສັງຄົມ. ຄົນສູງອາຍຸ ແລະ ຄົນທີ່ກຸ່ມເຂົ້າສູ່ຕະຫຼາດແຮງງານພາຍຫຼັງການຢຸດພັກ (ໂດຍສະເພາະ ແມ່ຍິງ), ຈະມີໂອກາດໃນການເຮັດວຽກໜ້ອຍລົງ, ເຮັດໃຫ້ຂາດຄວາມສາມາດ, ແລະ ກາຍເປັນພາລະຂອງຂະແໜງສະຫວັດດີການສັງຄົມ. ຄວາມບໍ່ສະເໝີພາບ ແລະ ຄວາມບໍ່ເທົ່າທຽມຈະສູງຂຶ້ນ.
5. ຄົນຈະບໍ່ເຂົ້າໃຈການປ່ຽນແປງຂອງສະພາບແວດລ້ອມ ແລະ ບໍ່ຮູ້ຈັກການປ່ຽນແປງພຶດຕິກຳ. ຄົນຈະບໍ່ມີຄວາມເຊື່ອໝັ້ນ ແລະ ບໍ່ມີແຮງຈູງໃຈໃນການເຂົ້າຮ່ວມແກ້ບັນຫາສິ່ງແວດລ້ອມ. ຄວາມພະຍາຍາມໃນວຽກງານເສດຖະກິດສີຂຽວຈະເປັນໄປໄດ້ຍາກ ແລະ ສັງຄົມຈະມີຄວາມເຄັ່ງຕຶງ.

ຕໍ່ຈາກໜ້າ 8

- ສະໜັບສະໜູນຄວາມຮ່ວມມືຂອງຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາໃຫ້ມີສ່ວນຮ່ວມໃນຊຸມຊົນ ອີງຕາມການສຶກສາສຳລັບການພັດທະນາແບບຍືນຍົງໃນສູນການຮຽນຮູ້ຊຸມຊົນ. ໂດຍສະເພາະການສ້າງຄະນະກຳມາທິການບໍລິການສຳລັບການຮຽນຮູ້ຜູ້ໃຫຍ່ ແລະ ການສຶກສາໃນທຸກລະດັບ ເພື່ອສົ່ງເສີມການຮ່ວມມືແຕ່ລະພາກສ່ວນ ແລະ ຊ່ວຍເຫຼືອດ້ານງົບປະມານ ສຳລັບການຮຽນຮູ້ຜູ້ໃຫຍ່ ແລະ ການສຶກສາໂດຍຜ່ານສູນການຮຽນຮູ້ຊຸມຊົນ.
- ຮັບປະກັນໃຫ້ມີຊັບພະຍາກອນພຽງພໍ ເພື່ອໃຫ້ສູນການຮຽນຮູ້ຊຸມຊົນມີການເຮັດວຽກທີ່ດີຂຶ້ນ. ໂດຍສະເພາະ ຮັບປະກັນວ່າແຕ່ລະສູນການຮຽນຮູ້ຊຸມຊົນຕ້ອງມີພະນັກງານປະຈຳສຳລັບການເຮັດວຽກບໍລິຫານ ແລະ ການວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກຳໃນສູນຮຽນຮູ້ຊຸມຊົນ ລວມທັງການສຶກສາສຳລັບການພັດທະນາແບບຍືນຍົງ.
- ພັດທະນາຄວາມອາດສາມາດຂອງພະນັກງານ ແລະ ຄູຂອງສູນການຮຽນຮູ້ຊຸມຊົນ ເພື່ອການຈັດຕັ້ງປະຕິບັດວຽກງານການສຶກສາສຳລັບການພັດທະນາແບບຍືນຍົງ ໂດຍໃຫ້ມີການຝຶກອົບຮົມໃນຫົວຂໍ້ທີ່ກ່ຽວຂ້ອງກັບເຂົາເຈົ້າ. ການພັດທະນາຄວາມອາດສາມາດຂອງພະນັກງານສູນການຮຽນຮູ້ຊຸມຊົນແມ່ນມີຄວາມສຳຄັນຫຼາຍ ເພື່ອຮັບປະກັນຄຸນນະພາບການສຶກສາສຳລັບການພັດທະນາແບບຍືນຍົງ ໃນລະດັບທ້ອງຖິ່ນ.




ໂລກຈະມີຄ່າໃຊ້ຈ່າຍສູງ ຖ້າບໍ່ເອົາໃຈໃສ່ກັບທ່າແຮງຂອງ ALE. ການຂະຫຍາຍໂຕຊ້າຂອງ ALE ຈະກ້າວໄປເຖິງປະຊາຊົນຈະຖືກທ້າຮັບໂດຍການປ່ຽນແປງຂອງໂລກ, ເຊິ່ງມີຂະໜາດໃຫຍ່ກວ່າບຸກຄົນ, ກຸ່ມຄົນ ຫຼື ປະເທດໃດໜຶ່ງ. ການແຕ້ມຮູບກ່ຽວກັບຫຼັກຖານໃນບົດລາຍງານສະບັບນີ້, ຢູເນດສະໂກ ສະໜັບສະໜູນໃຫ້ບັນດາປະເທດຕ່າງໆ ເບິ່ງໄປທີ່ອະນາຄົດ ແລະ ສ້າງວິທີການທີ່ເຂັ້ມແຂງສຳລັບ ALE ໃນໃນຮູບແບບຂອງວາລະການສຶກສາ 2030 ສຳລັບການພັດທະນາແບບຍືນຍົງ.

ບົດລາຍງານສະບັບເຕັມ ສາມາດດາວໂຫຼດໄດ້ທີ່ http://www.uil.unesco.org/system/files/grale-3.pdf.

ສິ່ງທີ່ໜ້າສົນໃຈ
ເວັບໄຊສຳຄັນໃນພາກພື້ນ
www.aspbae.org
www.pria.org
www.seameocelll.org

ສິ່ງພິມທີ່ໜ້າສົນໃຈ
Adult Education and Development
AED 79: Networking - Rio + 20 - Lifelong Learning
AED 80: Post 2015
AED 81: Communities
AED 82: Global Citizenship Education

ທັດສະນະນາໆຊາດ ໃນວຽກງານການສຶກສາຜູ້ໃຫຍ່
IPE 76: Refugees: A challenge for adult education
IPE 75: Agenda - 2030 - Education and Lifelong Learning in the Sustainable Development Goals
IPE 74: 21th Century Mass Graves - Proceeding of the International Conference Tbilisi, Georgia
IPE 73: Digital Adult Education - A Key to Global Development?

ຈົດໝາຍຂ່າວ ໃນພາກພື້ນ
The ASPBAE Bulletin access via www.aspbae.org
NEXUS - access via www.uil.unesco.org
Voice Rising - access via www.icae2.org
Education Policy Matters - via www.unescobkk.org

ສິ່ງພິມໃໝ່
DVV International Impact Report 2009-2015
Sharing for Learning in Lao PDR: DVV International Engaged in Lifelong Learning for Sustainable Development in Asia Pacific

ຈັດພິມໂດຍ ດີວີວີ ອິນເຕີເນເຊີນແນວ
ຮ່ວມກັບຄູ່ຮ່ວມພັດທະນາໃນ ສອອ ລາວ, ກຳປູເຈຍ ແລະ
ໃນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້

ກອງບັນນາທິການ: ດຣ. ກ້າ ສະເຫຼີມສຸກ, ຂັນທອງ ອິນທະຈັກ,
ພິລານີ ພິດສະໄໝ
ທີມງານບັນນາທິການ: ດາລຸນນີ ສີສຸລາດ, ສົມໃຈ ແກ້ວເມກ,
ດອກຄຳ ຊົມສີຫາປັນຍາ, ເກສາ ດອມ
ບັນນາທິການ: ອູເວີ ກາກເຕີນສະແລເກີ

ດີວີວີ ອິນເຕີເນເຊີນແນວ
ຫ້ອງການປະຈຳພາກພື້ນອາຊີໃຕ້ ແລະ
ອາຊີຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່, ບ້ານທ່າພະລານໄຊ,
ເມືອງສີສັດຕະນາກ
ຕູ້ ປ.ນ. 215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ.: +856 21 315832-3
ແຟັກ:+856 21 312511
info@dvv-international.la
www.dvv-international.la

**Education for Everyone. Worldwide. Lifelong.**